ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ສື່ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

# ຜູ້ວ່າການ ທຫລ
# ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດ ທົ່ວປະເທດ ຄັ້ງທີ XII




ໃນລະຫວ່າງວັນທີ 28-29 ເມສາ 2026, ທີ່ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ, ກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດ ທົ່ວປະເທດ ຄັ້ງທີ XII ໄດ້ໄຂຂຶ້ນພາຍໃຕ້ຄຳຂວັນ "ຍົກສູງບົດບາດຂອງແນວລາວສ້າງຊາດສູ່ຄຸນະພາບໃໝ່ເສີມສ້າງມະຫາສາມັກຄີ ແລະ ເຕົ້າໂຮມກຳລັງແຮງຂອງທົ່ວປວງຊົນທັງຊາດ ເຂົ້າໃນການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ" ໂດຍການເປັນປະທານຂອງສະຫາຍ ສຈ.ປອ ກິແກ້ວ ໄຂຄຳພິທູນ ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ພ້ອມນີ້ ກອງປະຊຸມໃຫຍ່ ໄດ້ເປັນກຽດເຂົ້າຮ່ວມຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ພ້ອມດ້ວຍບັນດາການນຳຂັ້ນສູງພັກ-ລັດ, ອະດີດການນຳຂັ້ນສູງພັກ-ລັດ, ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ແຂວງທົ່ວປະເທດ ພ້ອມດ້ວຍ ຜູ້ແທນກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດທົ່ວປະເທດເຂົ້າຮ່ວມຢ່າງພ້ອມພຽງ. ພ້ອມກັນນີ້, ໃນວັນທີ 29 ເມສາ 2026 ສະຫາຍ ນ. ບຸນຄຳ ວໍລະຈິດ ຄະນະເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຜູ້ວ່າການ ທຫລ ໄດ້ເຂົ້າຮ່ວມ ກອງປະຊຸມດັ່ງກ່າວ.

ກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດ ທົ່ວປະເທດ ຄັ້ງທີ XII ໄດ້ຮັບຟັງການລາຍງານສະຫຼຸບຕີລາຄາໝາກຜົນການຈັດຕັ້ງປະຕິບັດຂອງກຳມະການສູນກາງແນວລາວສ້າງຊາດ ສະໄໝທີ XI ຂອງສູນກາງແນວລາວສ້າງຊາດ ແລະ ແນວລາວສ້າງຊາດໃນທົ່ວປະເທດ ໃນການປະຕິບັດບົດບາດຂອງຕົນໃນຕະຫຼອດ 5 ປີ ທີ່ຜ່ານມາ (2021-2025) ແລະ ທິດທາງແຜນການໃນ 5 ປີຕໍ່ໜ້າ (2026-2030), ແຜນພັດທະນາອົງການແນວລາວສ້າງຊາດ, ກົດລະບຽບຂອງແນວລາວສ້າງຊາດ ສະໄໝທີ XII ແລະ ບົດສຳຫຼວດການນຳລວມຂອງຄະນະກຳມະການສູນກາງແນວລາວ

ສ້າງຊາດສະໄໝທີ XI, ກອງປະຊຸມໃຫ່ຍ ໄດ້ຮັບຟັງການປະກອບຄຳເຫັນຈາກຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການພາຄີ, ແນວລາວສ້າງຊາດຂັ້ນທ້ອງຖິ່ນ, ຕົວແບບດີເດັ່ນ ເພື່ອຢັ້ງຢືນຕື່ມຕໍ່ຮ່າງລາຍງານການເມືອງ, ຊຶ່ງໄດ້ຍົກໃຫ້ເຫັນບາງບົດຮຽນທີ່ດີ, ປະສົບການຕົວຈິງ ແລະ ບາງຕົວຢ່າງທີ່ມີຊີວິດຊີວາຂອງທ້ອງຖິ່ນ; ພ້ອມກັນນີ້, ກອງປະຊຸມໃຫຍ່ໄດ້ຮັບຮອງເອົາບັນດາເອກະສານທີ່ໄດ້ນຳສະໜີຕໍ່ ກອງປະຊຸມໃຫຍ່ດ້ວຍຄວາມສຽງເປັນເອກະສັນ. ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ເປັນເອກະສັນຢ່າງສົມບູນໃນການພິຈາລະນາ ແລະ ຮັບຮອງເອົາຄະນະກຳມະການສູນກາງແນວລາວສ້າງ




ຊາດ ສະໄໝທີ XII ຈຳນວນ 250 ສະຫາຍ, ຍິງ 55 ສະຫາຍ, ພຣະສົງ 20 ອົງ ຊຶ່ງໃນນັ້ນ ສະຫາຍ ພານຸສັກ ແກ່ນວົງພະຈັນ ກຳມະການຄະນະພັກ ທຫລ, ຫົວໜ້າຫ້ອງການ ທີ່ຕາງໜ້າໃຫ້ ທຫລ ໄດ້ຖືກຮັບຮອງເປັນຄະນະກຳມະການສູນກາງແນວລາວສ້າງຊາດສະໄໝທີ XII; ກອງປະຊຸມຄັ້ງປະຖົມມະລຶກ ໄດ້ຮັບຮອງເອົາ ຄະນະປະຈຳສູນກາງແນວລາວສ້າງຊາດ ສະໄໝທີ XII ຈຳນວນ 11 ສະຫາຍ, ຍິງ 03 ສະຫາຍ, ຮັບຮອງເອົາ ປະທານ, ຮອງປະທານ ສູນກາງແນວລາວສ້າງຊາດ ສະໄໝທີ XII ຈຳນວນ 7 ສະຫາຍ, ຍິງ 2 ສະຫາຍ. ພ້ອມນີ້, ກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດທົ່ວປະເທດ ໃນຄັ້ງນີ້ ຍັງໄດ້ເປັນກຽດຮັບຟັງການໂອ້ລົມຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ເພື່ອເປັນເຂັມຊີ້ທິດເຍືອງທາງໃຫ້ຄະນະກຳມະການສູນກາງແນວລາວສ້າງຊາດ ສະໄໝທີ XII ໃນການນຳພາ-ຊີ້ນຳວຽກງານແນວລາວສ້າງຊາດແຕ່ລະຂັ້ນໃນຕໍ່ໜ້າ ໃຫ້ມີປະສິດທິຜົນຍິ່ງຂຶ້ນ.

**ຂ່າວ: ຫ້ອງການ ທຫລ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**